ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການຄ້າພາຍໃນ ເລກທີ 0458/ ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 17 ມີນາ 2026

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ.

**ເລື່ອງ:** ປັບຂຶ້ນລາຄານໍ້າມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ມະຕິ ຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 35/ຄປຈ, ລົງວັນທີ 17 ມີນາ 2026;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 1999/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ທິດຊີ້ນໍາຂອງຄະນະນໍາກະຊວງອຸດສາຫະກໍາ ແລະ ການຄ້າ ຄັ້ງວັນທີ 17 ມີນາ 2026;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານໍ້າມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານໍ້າມັນເຊື້ອໄຟທຸກຊະນິດ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນໍ້າມັນເຊື້ອໄຟ ໃຫ້ເປັນປົກກະຕິ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:

1. ປັບຂຶ້ນລາຄານໍ້າມັນເຊື້ອໄຟ ຄື: ນໍ້າມັນແອັດຊັງ ປັບຂຶ້ນ 4,430 ກີບ/ລິດ ແລະ ນໍ້າມັນກາຊວນ ປັບຂຶ້ນ 4,770 ກີບ/ລິດ.

   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງ:

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ນໍ້າມັນແອັດຊັງ | 32,470 | 36,900 | +4,430 | 13.64 | |
| 2 | ນໍ້າມັນກາຊວນ | 32,330 | 37,100 | +4,770 | 14.75 | |

(ສໍາລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດວັນທີ 18 ມີນາ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການປັບລາຄານໍ້າມັນເຊື້ອໄຟ ຄັ້ງນີ້ແມ່ນ ຫຼຸດອັດຕາອາກອນຊົມໃຊ້ ນໍ້າມັນແອັດຊັງທໍາມະດາ ຈາກ 25% ມາເປັນ 15 % ແລະ ນໍ້າມັນກາຊວນ 10% ມາເປັນ 0%; ນໍ້າມັນແອັດຊັງພິເສດ ນໍາໃຊ້ອັດຕາ ພາສີ ຂາເຂົ້າ ແລະ

ອາກອນຊົມໃຊ້ ແລະ ລາຄາ CIF ອັນດຽວກັບ ແອັດຊັງທຳມະດາ ແລະ ຂາຍໃນລາຄານ້ຳມັນແອັດຊັງທຳມະດາ ແລະ ຕັດຄ່າຍອດສານມາກເກີເພື່ອຕິດຕາມນ້ຳມັນເຊື້ອໄຟ.

4. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0457/ກຄພນ, ລົງວັນທີ 17 ມີນາ 2026 ຈົນກວ່າຈະມີການປ່ຽນແປງ.
5. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
6. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ ຂອງປ້ຳນ້ຳມັນເຊື້ອໄຟ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
7. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0422/ກຄພນ, ລົງວັນທີ 13 ມີນາ 2026.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

**ສັນຕິສຸກ ພູນສະຫວັດ**

**ບ່ອນສົ່ງ:**

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຄະນະເລຂາທິການ, ສະພາແຫ່ງຊາດ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ (ເພື່ອຕິດຕາມ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 18 ມີນາ 2026, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງ | ກາຊວນ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **36,900** | **37,100** |
| 2 | ແຂວງຜົ້ງສາລີ | **37,890** | **38,090** |
| 3 | ແຂວງຫຼວງນ້ຳທາ | **37,400** | **37,590** |
| 4 | ແຂວງອຸດົມໄຊ | **37,570** | **37,770** |
| 5 | ແຂວງບໍ່ແກ້ວ | **37,000** | **37,200** |
| 6 | ແຂວງຫຼວງພະບາງ | **37,410** | **37,610** |
| 7 | ແຂວງໄຊຍະບູລີ | **37,230** | **37,430** |
| 8 | ແຂວງຫົວພັນ | **37,410** | **37,610** |
| 9 | ແຂວງຊຽງຂວາງ | **37,090** | **37,290** |
| 10 | ແຂວງວຽງຈັນ | **36,900** | **37,100** |
| 11 | ແຂວງບໍລິຄຳໄຊ | **36,950** | **37,150** |
| 12 | ແຂວງຄຳມ່ວນ | **36,930** | **37,130** |
| 13 | ແຂວງສະຫວັນນະເຂດ | **36,930** | **37,130** |
| 14 | ແຂວງສາລະວັນ | **37,190** | **37,390** |
| 15 | ແຂວງຈຳປາສັກ | **36,960** | **37,160** |
| 16 | ແຂວງເຊກອງ | **37,180** | **37,390** |
| 17 | ແຂວງອັດຕະປື | **37,230** | **37,430** |
| 18 | ແຂວງໄຊສົມບູນ | **37,320** | **37,530** |

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການຄ້າພາຍໃນ

17 ມີນາ 2026